## ຄຳຖະແຫຼງຈາກກອງປະຊຸມທີ່ ຊີລີກາ (Chilika)

ກອງປະຊຸມກ່ຽວກັບດິນທາມຢູ່ໃນຂົງເຂດອາຊີ, ຊຶ່ງໄດ້ຈັດຂຶ້ນທີ່ ຊີລີກາ(Chilika) ບູບາເນສະວາຣ໌ (Bhubaneswar), ອໍຣິສາ (Orissa) ທີ່ປະເທດອິນເດຍ ໃນຄັ້ງວັນທີ່ 6-9, ເດືອນກຸມພາ, ປີ 2005. ໃນກອງປະຊຸມດັ່ງກ່າວມີຈຳນວນ 400 ທ່ານ, ຊຶ່ງເປັນຕົວແທນຈາກ 32 ປະເທດໄດ້ເຂົ້າຮ່ວມ.

ດິນທາມຢູ່ໃນຂົງເຂດອາຊີ ເປັນລະບົບນິເວດທີ່ສຳຄັນຂອງທຳມະຊາດ ແລະ ຍັງມີໜ້າທີ່ສະໜອງປັດໃຈຫຼາຍດ້ານໃຫ້ແກ່ການດຳລົງຊີວິດຂອງປະຊົນທ້ອງຖິ່ນ. ການເພີ່ມຂຶ້ນຂອງປະຊາກອນຢ່າງໄວວາ ແລະ ການຂາດແຄນໃນການສ້າງຈິດສຳນຶກໃຫ້ແກ່ເຂົາເຈົ້ານັ້ນມັນໄດ້ເປັນຄະນວນສຳຄັນທີ່ນຳໄປສູ່ຜົນກະທົບໃນແງ່ລົບແກ່ລະບົບນິເວດຂອງດິນທາມ ແລະ ເປັນການເພີ່ມຄວາມສ່ຽງຕໍ່ຄວາມເດືອດຮ້ອນຕໍ່ກັບຜູ້ຊົມໃຊ້ຜົນປະໂຫຍດດັ່ງກ່າວ. ຄວາມບໍ່ດູນດ່ຽງກັນລະຫວ່າງການພັດທະນາ, ຄວາມທຸກຈົນ ແລະ ການຟື້ນຟູດິນທາມທີ່ບໍ່ມີປະສິດທິຜົນໄດ້ກາຍເປັນບັນຫາທີ່ທ້າທາຍ ແລະ ຈຳເປັນຕ້ອງໄດ້ຮັບການແກ້ໄຂຢ່າງຮີບດ່ວນ.

ກອງປະຊຸມກ່ຽວກັບດິນທາມຢູ່ໃນຂົງເຂດອາຊີໃນປີ 1992 ແລະ 2001 ໄດ້ມີຄຳແນະນຳວ່າ ກົນໄກທີ່ມີປະສິດທິພາບໃນການປົກປັກຮັກສາ ແລະ ການນຳໃຊ້ຊຸນປະໂຫຍດຈາກດິນທາມຢ່າງສະຫຼາດຢູ່ໃນຂົງເຂດອາຊີ ໂດຍຜ່ານການປະສານງານລະຫວ່າງເຄືອຄ່າຍອົງການຈັດຕັ້ງໃນລະດັບສາກົນ, ໃນລະດັບຊາດ ແລະ ສ່ວນບຸກຄົນ. ທິດທາງຍຸດທະສາດໃໝ່, ການເປັນຜູ້ຮ່ວມງານ ແລະ ຄວາມເປັນແບບຢ່າງຂອງການຈັດການທີ່ອີງໃສ່ຊຸມຊົນແມ່ນໄດ້ປະກົດຂຶ້ນ, ໂດຍມີສົມທົບລະຫວ່າງຄວາມຮູ້ ແລະ ປະສົບການຂອງວິຊາການກັບປະສົບການຂອງ ທ້ອງຖິ່ນ.

ສິ່ງທີ່ໂດດເດັ່ນຂອງ ໜອງຊີລີກາລາກອນ (Chilika Lagoon) ທີ່ປະເທດອິນເດຍໄດ້ເປັນແບບຢ່າງໃນການປົກປັກຮັກສາ ແລະ ນຳໃຊ້ຊຸນປະໂຫຍດຈາກດິນທາມແບບຄຸ້ມຄ່າແລະຍາວນານ, ຊຶ່ງບົນພື້ນຖານຫຼັກການທີ່ວ່າ ການຈັດການແບບເຊື່ອມໂຍງ, ການມີສ່ວນຮ່ວມໃນການຕັດສິນໃຈ ແລະ ການປະຕິບັດໂດຍອາໄສປະສົບການຂອງທ້ອງຖິ່ນ, ລະດັບຊາດ ແລະ ລະດັບສາກົນຢ່າງເປັນລະບົບ. ການຮັບຮອງເອົາມາດຕະການການຟື້ນຟູໄດ້ເປັນສິ່ງທີ່ສຳຄັນໃນການພັດທະນາເສດຖະກິດ-ສັງຄົມຂອງຊຸມຊົນທີ່ດຳລົງຊີວິດຢູ່ໃນບໍເວນໜອງຊີລີກາລາກອນ, ພ້ອມດຽວກັນນັ້ນກໍ່ສາມາດຮັກສາລະດັບຄວາມອຸດົມສົມບູນຂອງລະບົບນິເວດວິທະຍາຂອງໜອງດັ່ງກ່າວໄດ້ເປັນຢ່າງດີ.

ຊູນາມິເກີດຂຶ້ນຢູ່ທະເລອິນເດຍຫຼາຍຄັ້ງໄດ້ສ້າງຄວາມເສຍຫາຍຕໍ່ຊັບພະຍາກອນທີ່ຢູ່ລຽບຕາມແຄມຝັ່ງທະເລຕະຫຼອດເຖິງການດຳລົງຊີວິດຂອງປະຊາຊົນ, ຊຶ່ງເປັນບັນຫາທີ່ທ້າທາຍສຳລັບການຟື້ນຟູດິນທາມຢູ່ບໍລິເວນແຄມຝັ່ງທະເລ, ລວມທັງປ່າຊາຍເລນ, ຫຍ້າທະເລ, ປະກາລັງ ແລະ ສິ່ງອື່ນໆທີ່ກ່ຽວຂ້ອງກັບລະບົບນິເວດວິທະຍາແຄມຝັ່ງ.

ດັ່ງນັ້ນພວກເຮົາຈຶ່ງໄດ້ຮຽກຮ້ອງໃຫ້ຫຼຸດຜ່ອນສາຍເຫດທີ່ກີດໜ່ວງຕໍ່ການພັດທະນາແບບຍືນຍົງ, ໂດຍອີງໃສ່ພື້ນຖານຄວາມຮັບຮູ້ກ່ຽວກັບຍຸດທະສາດ ແລະ ເຕັກນິກເຂົ້າໃນການປົກປັກຮັກສາ ແລະ ຟື້ນຟູລະບົບນິເວດວິທະຍາຂອງດິນທາມ ແລະ ການຍົກລະດັບຊີວິດການເປັນຢູ່ຂອງຊຸມຊົນ; ຄຸນຄ່າທາງວັດທະນາທຳຂອງດິນທາມໄດ້ເຮັດໃຫ້ຊຸມຊົນທີ່ອາໄສຢູ່ບໍລິເວນດັ່ງກ່າວມີຄວາມເຊື່ອມໂຍງກັນໃນການຄຸ້ມຄອງ, ເຊັ່ນດຽວກັນກັບແຜນພັດທະນາຫຼັກທີ່ມີບົດບາດສຳຄັນທາງລະບົບນິເວດວິທະຍາ ແລະ ຄຸນຄ່າທາງເສດຖະກິດໄດ້ຮັບການສະໜັບສະໜູນເພື່ອບັນລຸຜົນສຳເລັດໃນການຫຼຸດຜ່ອນຄວາມທຸກຈົນ ແລະ ການພັດທະນາແບບຍືນຍົງ

ດ້ວຍເຫດນັ້ນ, ພວກເຮົາຈຶ່ງໄດ້ຮຽກຮ້ອງໃຫ້ມີການກະທຳແບບໃໝ່, ຊຶ່ງເປັນວິທີພື້ນຖານທີ່ນຳໃຊ້ເຂົ້າໃນການສົ່ງເສີມການອະນຸລັກ ແລະ ການຈັດການລະບົບນິເວດວິທະຍາຂອງດິນທາມ, ທັງເປັນການຊຸກຍູ້ການດຳລົງຊີວິດແບບຍືນຍົງໂດຍເນັ້ນປະ

ເດັ່ນທີ່ສຳຄັນດັ່ງລຸ່ມນີ້:

- ບຳລຸງຮັກສາສະພາບແວດລ້ອມໃຫ້ຢູ່ໃນສະພາບທີ່ດີຢ່າງຕໍ່ເນື່ອງເພື່ອເປັນການຮອງຮັບຄວາມໝັ້ນຄົງທາງລະບົບນິເວດວິທະຍາຂອງດິນທາມ.
- ຊຸກຍູ້ສົ່ງເສີມການອະນຸລັກຊີວະນາໆພັນ ແລະ ການນຳໃຊ້ຊັບພະຍາກອນຈາກດິນທາມແບບຍືນຍົງດ້ວຍການໝູນໃຊ້ຄວາມຮູ້ແລະສະຕິປັນຍາຂອງປະຊາຊົນທ້ອງຖິ່ນ.
- ປະສານສົມທົບຄວາມຮູ້ຈາກເອກະສານ, ມໍລະດົກວັດທະນາທຳ ແລະ ແນວທາງນະໂຍບາຍເຂົ້າໃນການອະນຸລັກ ແລະ ການຈັດການ.
- ສົ່ງເສີມການດຳລົງຊີວິດຂອງປະຊາຊົນທ້ອງຖິ່ນຢ່າງຮີບດ່ວນໂດຍຜ່ານພື້ນຖານຄວາມຮູ້ທ້ອງຖິ່ນ ແລະ ກິດຈະການທີ່ກ່ຽວຂ້ອງກັບສິ່ງແວດລ້ອມ, ລວມທັງການທ່ອງທ່ຽວເຊີງອະນຸລັກ ແລະ ການສົ່ງເສີມການມີສ່ວນຮ່ວມລະຫວ່າງລັດ-ເອກະຊົນໂດຍເສີມຄຸນຄ່າຜົນຜະລິດຈາກດິນທາມ, ເພື່ອເປັນການເສີມລາຍໄດ້ ແລະ ທັງເປັນການຫຼຸດຜ່ອນຄວາມກົດດັນຕໍ່ກັບຊັບພະຍາກອນດິນທາມ.
- ສ້າງໃຫ້ຊຸມຊົນກາຍເປັນສະຖາບັນພື້ນຖານທີ່ໝັ້ນຄົງ, ເພື່ອໃຫ້ສິດກຸ່ມຄົນທີ່ນຳໃຊ້ຜົນປະໂຫຍດຈາກຊັບພະຍາກອນທ້ອງຖິ່ນໄດ້ຖືກຮັບຮອງຢູ່ໃນຂະບວນການຂອງການວາງແຜນພັດທະນາ ແລະ ການນຳໃຊ້ແຜນການຄຸ້ມຄອງ.
- ດິນທາມໄດ້ກາຍເປັນກະແສຫຼັກທີ່ສຳຄັນ, ມັນແມ່ນພາກສ່ວນນຶ່ງທີ່ນອນຢູ່ໃນແຜນພັດທະນາທຸກລະດັບ, ເພື່ອໃຫ້ມີການພັດທະນາແບບຍືນຍົງ.
- ຮັບຮອງເອົານະໂຍບາຍການປົກປັກຮັກສາ ແລະ ຄຸ້ມຄອງດິນທາມ. ວາງແຜນການ ແລະ ຍຸດທະສາດສຳລັບການໃຊ້ຄຸນປະໂຫຍດຈາກດິນທາມຢ່າງມີໄຫວພິບ.
- ກຳນົດ, ສົ່ງເສີມ ແລະ ສະທ້ອນໃຫ້ເຫັນບັນດາກໍລະນີທີ່ໄດ້ຮັບຜົນສຳເລັດຂອງການມີສ່ວນຮ່ວມສຳລັບການຄຸ້ມຄອງ, ປົກປັກຮັກສາດິນທາມ ແລະ ເຜີຍແຜ່ບັນດາຕົວຢ່າງເຫຼົ່ານີ້ໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບພາກພື້ນ.
- ການສ້າງຈິດສຳນຶກໃຫ້ແກ່ຊຸມຊົນຮັບຮູ້ເຖິງກິດຈະກຳພື້ນຖານລ່ວງໜ້າ, ເພື່ອເຮັດໃຫ້ເຂົາເຈົ້າປ່ຽນແປງທັດສະນະຄະຕິນັ້ນ, ໄດ້ກາຍເປັນບຸລິມະສິດສຳຄັນທີ່ຖືກມອບໝາຍໃນການພັດທະນາດິນທາມແບບຍືນຍົງ.
- ສົ່ງເສີມ ແລະ ພັດທະນາຄວາມເຂັ້ມແຂງຂອງບັນດາໂຄງການສຳຫຼັບຜູ້ບໍລິຫານກໍ່ຄືຜູ້ຈັດການດິນທາມເຊັ່ນ: ຜູ້ວາງນະໂຍບາຍ, ຜູ້ວາງແຜນ, ຜູ້ປະຕິບັດ, ສື່ມວນຊົນ, ຜູ້ຕັດສິນໃຈ ແລະ ຊຸມຊົນທ້ອງຖິ່ນ.
- ຟື້ນຟູດິນທາມເພື່ອຮັກສາລະບົບນິເວດວິທະຍາໃຫ້ມີຄວາມໝັ້ນຄົງ ແລະ ເພື່ອການດຳລົງຊີວິດແບບຍືນຍົງຂອງປະຊາຊົນທ້ອງຖິ່ນ.
- ຟື້ນຟູຝັ່ງທະເລຂົງເຂດດິນທາມທີ່ໄດ້ຮັບຜົນກະທົບຈາກທໍລະນີພິບັດ ຊຸນາມິ ໃຫ້ສູ່ສະພາບປົກກະຕິ. ຟື້ນຟູການດຳລົງຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໄພພິບັດດັ່ງກ່າວ ແລະ ການອະນຸລັກຊີວະນາໆພັນເປັນເລື່ອງທີ່ຮີບດ່ວນ.

ດັ່ງນັ້ນຜູ້ຈັດຕັ້ງກອງປະຊຸມຈຶ່ງຄົ້ນຄ້ວາແລະຂໍຄວາມຊ່ວຍເຫຼືອໃຫ້ລັດຖະບານອິນເດຍ ແລະ ລັດຖະບານຍີປຸ່ນຈຶ່ງໄດ້ນຳເອົາຄຳຖະແຫຼງນີ້ຕໍ່ກອງປະຊຸມກ່ຽວກັບການອະນຸລັກດິນເບື້ອມດິນທາມໃນຂົງເຂດອາຊີຄັ້ງທີ່ 9, ຊຶ່ງຈະໄດ້ຈັດຂຶ້ນທີ່ ກາມປາລາ, ອູການດາ ໃນເດືອນພະຈິກ ປີ 2005, ແລະ ກອງປະຊຸມກ່ຽວກັບທະເລສາບຂອງໂລກທີ່ ໄນໂຣບີ, ເຄນຢາ ໃນ ເດືອນຕຸລາ ປີ 2005.

ບູບາເນສະວາຣ໌, 9 ກຸມພາ 2005.